| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດຊວດຈໍາ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| BoL-FISD-4 | 20.08.2017 | ກົມຄຸ້ມຄອງສະຖາບັນການເງິນ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | K - ການເຄື່ອນໄຫວດ້ານການເງິນ ແລະ ການປະກັນໄພ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ເນື່ອງຈາກທຸລະກິດຊວດຈໍາ ເປັນ ສະຖາບັນການເງິນ ທີ່ເຂົ້າເຖິງໄດ້ງ່າຍໂດຍບຸກຄົນທົ່ວໄປ, ໂດຍສະເພາະແມ່ນ ກຸ່ມຜູ້ທີ່ອາດບໍ່ສາມາດເຂົ້າເຖິງແຫລ່ງທຶນທີ່ເປັນທາງການອື່ນ ເຊັ່ນ ທະນາຄານ ຫລື ສະຖາບັນການເງິນອື່ນ, ອາດສ້າງຄວາມສ່ຽງຕໍ່ກຸ່ມຄົນດັ່ງກ່າວໄດ້, ສະນັ້ນຈຶ່ງມີຄວາມຈໍາເປັນທີ່ຈະຕ້ອງຈັດການ ແລະ ຄຸ້ມຄອງການອອກອະນຸຍາດໃຫ້ບຸກຄົນທີ່ຈະລົງທຶນໃນທຸລະກິດປະເພດດັ່ງກ່າວ. |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ຫລື ນິຕິບຸກຄົນທີ່ມີຈຸດປະສົງໃຫ້ບໍລິການດ້ານການເງິນ ຫລື ຜູ້ໃຫ້ເງິນກູ້ຢືມລາຍຍ່ອຍ ໂດຍຮັບເອົາວັດຖຸສິ່ງຂອງທີ່ເປັນສັງຫາລິມະຊັບ ມາເປັນຫລັກຊັບຄໍ້າປະກັນ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ແມ່ນແລ້ວ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | https://www.bol.gov.la/laoweb/microfinancelao4.html |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນກັບ ໃບອະນຸຍາດ | 1. ພາຍຫລັງໄດ້ຮັບໃບອະນຸຍາດສ້າງຕັ້ງເປັນຕົ້ນໄປ ຜູ້ໄດ້ຮັບໃບອະນຸຍາດ ຕ້ອງໄປແຈ້ງຂຶ້ນທະບຽນວິສາຫະກິດ ແລະ ທະບຽນອາກອນນໍາຂະແໜງການທີ່ກ່ຽວຂ້ອງ ໂດຍສອດຄ່ອງກັບກົດໝາຍ 2.  ນັບຈາກວັນທີ 1 ມີນາ 2017 ຮອດວັນທີ 28 ກຸມພາ 2019, ກົມແມ່ນໂຈະຊົ່ວຄາວ ການອະນຸຍາດສ້າງຕັ້ງ ໂຮງຊວດຈໍາ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄໍາຮ້ອງ ໃນການອອກໃບອະນຸຍາດ | 30 | ກົດໝາຍບໍ່ໄດ້ລະບຸໄລຍະເວລາໃນການພິຈາລະນາເອກະສານ ແຕ່ເຈົ້າໜ້າທີ່ແຈ້ງໄລຍະເວລາໃນ ການພິຈາລະນາແມ່ນປົກກະຕິ ບໍ່ກາຍ 30 ວັນລັດຖະການ |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | ເງື່ອນໄຂຜູ້ສະເໜີສ້າງຕັ້ງ: 1. ຖືສັນຊາດລາວ 2. ມີວຸດທິການສຶກສາ ຫລື ມີນັກວິຊາການລະດັບຊັ້ນສູງຂື້ນໄປ 3. ມີປະສົບການ ຫລື ມີນັກວິຊາການທີ່ມີປະສົບການ ກ່ຽວກັບ ການເງິນ, ການທະນາຄານ ແລະ ການບັນຊີ ຢ່າງໜ້ອຍ 2 ປີຂື້ນໄປ 4. ບໍ່ເຄີຍຖືກສານຕັດສິນ ຫລື ພິພາກສາລົງໂທດ ໃນສະຖານະການກະທໍາຜິດອາຍາ ກ່ຽວກັບ ການເງິນ, ການທະນາຄານ ແລະ ບໍ່ເຄີຍຖືກຖອນໃບອະນຸຍາດດໍາເນີນທຸລະກິດຊວດຈໍາມາກ່ອນ 5. ມີຂໍ້ມູນລະອຽດ ກ່ຽວກັບແຫລ່ງທີ່ມາຂອງເງິນທີ່ຈະນໍາມາລົງທຶນ ໃນທຸລະກິດຊວດຈໍາ 6. ມີຖານະການເງິນດີ, ໄດ້ຮັບຄວາມເຊື່ອຖື ແລະ ເປັນທີ່ຍອມຮັບຂອງປະຊາຊົນ ແລະ ອົງການປົກຄອງບ້ານ 7. ມີທຶນຈົດທະບຽນຕໍ່າສຸດ 1 ຕື້ກີບ 8. ມີສະຖານທີ່ຕັ້ງທີ່ເໝາະສົມ ແລະ ໄດ້ມາດຕະຖານ ເຊັ່ນ ມີຕູ້ນິລະໄພທີ່ປ້ອງກັນໄຟໄໝ້ໄດ້ ຢ່າງໜ້ອຍ 2 ຊົ່ວໂມງ ຂື້ນໄປ ແລະ ມີອຸປະກອນ ແລະ ເຄື່ອງມືທີ່ຈໍາເປັນ 9. ມີລະບົບດໍາເນີນງານ, ລະບົບກວດສອບ ແລະ ຄວບຄຸມວຽກພາຍໃນຢ່າງຄົບຊຸດ. | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ? | ປະຕິເສດ ໃນກໍລະນີທີ່ ຜູ້ສະເໜີຂໍສ້າງຕັ້ງບໍ່ສາມາດປະຕິບັດໄດ້ຕາມເງື່ອນໄຂທີ່ກໍານົດໄວ້ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກໍານົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ? |
| ບໍ່ມີ | 0 |
| ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ | ບໍ່ຕ້ອງມີການຕໍ່ອາຍຸໃບອະນຸຍາດ ແຕ່ສະຖາບັນການເງິນ ຕ້ອງໄດ້ເສຍຄ່າຄຸ້ມຄອງປະຈໍາປີ ເປັນແຕ່ລະປີ ກ່ອນວັນທີ 30 ມັງກອນ |

| ຄ່າທໍານຽມ | | | | |
|---|---|---|---|---|
| ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລື ບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າແບບຟອມຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |

| ຄ່າທໍານຽມ | | | | |
|---|---|---|---|---|
| ແມ່ນແລ້ວ | 2500000.00 | 500000.00 | 0.00 | 3000000.00 |
| **ຄໍາເຫັນ** | ອີງຕາມ ຂໍ້ຕົກລົງ ເລກທີ 926/ທຫລ, ລົງວັນທີ 11 ພະຈິກ 2015 | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າ ແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 200000.00 | 0.00 | 200000.00 |
| **ຄໍາເຫັນ** | ອີງຕາມ ຂໍ້ຕົກລົງ ເລກທີ 926/ທຫລ, ລົງວັນທີ 11 ພະຈິກ 2015 ບໍ່ແມ່ນຄ່າທໍານຽມການຕໍ່ອາຍຸ ແຕ່ແມ່ນຄ່າຄຸ້ມຄອງປະຈໍາປີທີ່ຕ້ອງໄດ້ຈ່າຍ ພາຍໃນເດືອນມັງກອນ ຂອງແຕ່ລະປີ ຈໍານວນ 0.02% ຂອງຊັບສິນສະເລ່ຍ (ທຶນຈົດທະບຽນຂັ້ນຕໍ່າແມ່ນ 1 ຕື້ກີບ) | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ກົດລະບຽບ** | **ເລກທີ** | **ວັນທີ** | **ຄໍາເຫັນ** |
| ດໍາລັດວ່າດ້ວຍ ທຸລະກິດຊວດຈໍາ | 248/ລບ | 26.07.2016 | ພາກທີ II ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງທຸລະກິດຊວດຈໍາ ໝວດທີ 1 ການສ້າງຕັ້ງທຸລະກິດຊວດຈໍາ (ມາດຕາ 5 ຫາ 11) |
| ແຈ້ງການ ເລື່ອງ ການໂຈະຊົ່ວຄາວ ການອອກອະນຸຍາດດໍາເນີນທຸລະກິດ ສະຖາບັນການເງິນ ຢູ່ ສປປ ລາວ | 95/ກຄສງ | 18.05.2017 | |
| ຂໍ້ຕົກລົງວ່າດ້ວຍ ຄ່າທໍານຽມ, ຄ່າບໍລິການໃນການຂໍອະນຸຍາດດໍາເນີນທຸລະກິດ ແລະ ຄ່າຄຸ້ມຄອງປະຈໍາປີ ຂອງສະຖາບັນການເງິນ | 926/ທຫລ | 11.11.2015 | ມາດຕາ 2 ຫາ ມາດຕາ 4 |
| ແຈ້ງການ ວ່າດ້ວຍ ເງື່ອນໄຂ ແລະ ການປະກອບເອກະສານສ້າງຕັ້ງ ໂຮງຊວດຈໍາ | 156/ກຄສງ | 17.02.2012 | |

| ເອກະສານປະກອບ |
| --- |
| **ຊື່ເອກະສານ** |
| ໃບທະບຽນວິສາຫະກິດ ຂອງບໍລິສັດຈໍາກັດ |
| ໃບຢັ້ງຢືນການມອບພັນທະອາກອນປະຈໍາປີ |
| ໃບຢັ້ງຢືນທີ່ຕັ້ງສໍານັກງານ |
| ສັນຍາຮ່ວມທຶນ, ສັນຍາສ້າງຕັ້ງ |
| ແຜນການດໍາເນີນທຸລະກິດ |
| ໃບແຕ່ງຕັ້ງຜູ້ຕາງໜ້າພົວພັນວຽກງານ |
| ກົດລະບຽບວິສາຫະກິດ |
| ສໍາເນົາບັດປະຈໍາຕົວ / ສໍາມະໂນຄົວ / ພາດສະປອດ ຂອງຜູ້ລົງທຶນ |
| ຮ່າງສັນຍາຊວດຈໍາ |
| ຊີວະປະຫວັດຫຍໍ້ຂອງຜູ້ຂໍສ້າງຕັ້ງ |
| ໃບຢັ້ງຢືນທີ່ຢູ່ |
| ແຜນວາດທີ່ຕັ້ງຂອງວິສາຫະກິດ |
| ສໍາເນົາບັດປະຈໍາຕົວ/ສໍາມະໂນຄົວຂອງອໍານວຍການ |
| ໃບແຈ້ງໂທດ |
| ໃບຢັ້ງຢືນຖານະທາງດ້ານການເງິນແລະຊັບສິນ |
| ໂຄງຮ່າງການຈັດຕັ້ງຂອງວິສາຫະກິດ |
| ກົດລະບຽບການດໍາເນີນງານພາຍໃນ |
| ບົດວິພາກເສດຖະກິດເຕັກນິກ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
| --- | --- | --- |
| **ປີ** | **ອອກໃໝ່** | **ຕໍ່ອາຍຸ** |
| 2016 | 0 | 27 |